**ຮ່າງບົດສະຫຼຸບ ກອງປະຊຸມຜົນການສໍາຫຼວດຂອງຜູ້ຊົມໃຊ້ບໍລິການຂອງລັດຢູ່ຂັ້ນເມືອງຄັ້ງທີ2**

**ຄັ້ງວັນທີ 30 ມີຖຸນາ 2021, ທີ່ກະຊວງການພາຍໃນ**

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 9 ປີ 2021-2025 ລັດຖະບານໄດ້ໃຫ້ຄໍາໝັ້ນສັນຍາວ່າຈະປັບປຸງການບໍລິການຂອງລັດໂດຍມີຈຸດສຸມ ເພື່ອການເສີມສ້າງການບໍລິການຂອງລັດໃຫ້ມີປະສິທິພາບ ແລະ ປະສິດທິຜົນ ໃຫ້ທົ່ວເຖິງເຂດຫ່າງໄກສອກຫຼີກ. ກອງປະຊຸມວິຊາການເພື່ອແລກປ່ຽນຜົນການສໍາຫຼວດຂອງຜູ້ຊົມໃຊ້ບໍລິການຂອງລັດຢູ່ຂັ້ນເມືອງ (ຮອບທີ2) ໄດ້ຈັດຂຶ້ນໃນວັນທີ 30 ມິຖຸນາ 2021ໂດຍມີຈຸດປະສົງເພື່ອແລກປ່ຽນຜົນການສໍາຫຼວດຂອງຜູ້ຊົມໃຊ້ບໍລິການຂອງລັດໃນ 4 ເມືອງເປົ້າໝາຍຄື: ເມືອງຊໍາເໜືອ-ແຂວງຜົ້ງສາລີ, ເມືອງຫຼາ-ແຂວງອຸດົມໄຊ, ເມືອງສະໜ້ອຍ-ແຂວງສາລະວັນ ແລະ ເມືອງດາກຈຶງ-ແຂວງເຊກອງ. ນອກຈາກນີ້, ມັນຍັງເປັນເວທີໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງໄດ້ແລກປ່ຽນປະສົບການຂອງເຂົາເຈົ້າໃນການນໍາໃຊ້ຜົນຂອງການສໍາຫຼວດນີ້ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງສະມາຊິກໃນເຂດເລືອກຕັ້ງຂອງພວກເຂົາ.

ພາຍໃຕ້ການເປັນປະທານຂອງ ທ່ານ ນິສິດ ແກ້ວບັນຍາ ຮອງລັດຖະມົນຕີກະຊວງພາຍໃນ ໄດ້ກ່າວມີຄໍາເຫັນຕໍ່ກັບຜົນການສໍາຫຼວດຄັ້ງ ນີ້ວ່າເປັນກົນໄກທີ່ ປະຊາຊົນສາມາດມີສ່ວນຮ່ວມໃນການສະແດງທັດສະນະຂອງເຂົາເຈົ້າ ຕໍ່ການບໍລິຫານຂອງລັດ ແລະ ການພັດທະນາຢູ່ເມືອງຂອງເຂົາເຈົ້າ ເຊິ່ງນີ້ກໍແມ່ນຄວາມມຸ້ງຫວັງອັນແຮງກ້າ ຂອງພັກ ແລະ ລັດຖະບານ ເຊິ່ງເປັນ "ລັດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນໂຫຍດຂອງປະຊາຊົນ" .ນອກນີ້ ການສໍາຫຼວດຄວາມຄິດເຫັນຂອງປະຊາຊົນ ກໍ່ຍັງເປັນຕົວຊີ້ວັດໜຶ່ງຂອງ ສປປ ລາວໃນການປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ໂດຍສະເພາະເປົ້າໝາຍທີ 16 ເພື່ອສົ່ງເສີມສັງຄົມທີ່ມີຄວາມສະຫງົບສຸກ ແລະ ການສ່ວນຮ່ວມ.

ຜູ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ປະກອບມີ ຕາງໜ້າບັນດາຄູ່ຮ່ວມພັດທະນາຂອງໂຄງການສົ່ງເສີມການປົກຄອງເພື່ອການພັດທະນາແບບມີສ່ວນຮ່ວມ (GPAR GIDP), - ທ່ານ ນາງ ອໍເຣລີ ຣິເກທີ (Aurelie Righetti), ຫົວໜ້າແຜນງານປົກຄອງ, ອົງການເພື່ອການພັດທະນາ ແລະ ການຮ່ວມມືປະເທດສະວິດເຊີແລນ, ແລະ ທ່ານ ທ່ານ ຊອນ ໂອຄອນແນວ (Seán O'Connell), ຫົວໜ້າໜ່ວຍການປົກຄອງ ອົງການ ສປຊ ເພື່ອການພັດທະນາ ແລະ ທ່ານ ທິລະພົງ ອຸດົມສິນ, ຜູ້ຊ່ຽວຊານດ້ານໂຄງການ ອົງການສະຫະປະຊາຊາດກອງທຶນເພື່ອການພັດທະນາ (UNCDF) ລວມທັງບັນດາຄູ່ຮ່ວມພັດທະນາອື່ນໆ ແລະ ອໍານາດການປົກຄອງທ້ອງຖິ່ນໄດ້ເຂົ້າຮ່ວມກອງປະຊຸມທາງໄກ ເປັນການປະຕິບັດຕາມມາດຕະການສະກັ້ນກັນ ແລະ ປ້ອງກັນການແຜ່ລະບາດຂອງເຊື້ອພະຍາດCOVID-19.

ທ່ານ ນາງ Righetti ໄດ້ກ່າວວ່າ ການສໍາຫຼວດດັ່ງກ່າວ ເປັນເຄື່ອງມືທີ່ສາມາດສະໜອງໄດ້ຫຼາຍຈຸດປະສົງ ເຊັ່ນ: ເພື່ອສົ່ງເສີມ ແລະ ອໍານວຍຄວາມສະດວກໃນການພົວພັນລະຫວ່າງຜູ້ໃຊ້ບໍລິການ (ປະຊາຊົນ) ແລະ ຜູ້ໃຫ້ບໍລິການ ໂດຍສະເພາະແມ່ນການບໍລິການຂອງລັດໃນຂັ້ນທ້ອງຖິ່ນ. ຄໍາຄິດເຫັນຂອງປະຊາຊົນແມ່ນຂໍ້ມູນທີ່ມີສໍາຄັນແກ່ລັດຖະບານເພື່ອນໍາໄປປັບປຸງການບໍລິການຂອງລັດໃຫ້ສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງປະຊົນ ລວມທັງກຸ່ມທີ່ມີຄວາມສ່ຽງ ແລະ ປະຊາຊົນທີ່ອາໄສຢູ່ເຂດຫ່າງໄກສອກຫຼີກ."

ການສໍາຫຼວດດັ່ງກ່າວແມ່ນສໍາຄັນຕໍ່ສະມາຊິກສະພາປະຊາຊົນຂັ້ນແຂວງ ເຊິ່ງເປັນການເກັບກໍາປະສົບການ ແລະ ຄໍາ ຄິດເຫັນຂອງປະຊາຊົນ ກ່ຽວກັບການມີສ່ວນຮ່ວມໃນການບໍລິຫານລັດຂັ້ນທ້ອງຖິ່ນ. ສະມາຊິກສະພາ ປະຊາຊົນຂັ້ນແຂວງໃນ 4 ເມືອງໄດ້ມີສ່ວນຮ່ວມຢ່າງຫ້າວຫັນໃນການປະຕິບັດຄັ້ງນີ້ ແລະ ໄດ້ສະແດງຄວາມມຸ່ງໝັ້ນທີ່ຈະນໍາໃຊ້ຜົນໄດ້ຮັບດັ່ງກ່າວເຂົ້າໃນການຕິດຕາມການໃຫ້ບໍລິການຂອງລັດໃນລະດັບເມືອງທີ່ຕົນຮັບຜິດຊອບ.

ທ່ານ O'Connell ກ່າວວ່າ, "ສະມາຊິກ ສະມາຊິກສະພາປະຊາຊົນຂັ້ນແຂວງຕ້ອງໄດ້ນໍາໃຊ້ຂໍ້ມູນຜົນການສໍາຫຼວດຈາກຂົງເຂດຂອງຕົນໂດຍກົງ ເຊິ່ງຊ່ວຍໃຫ້ເຫັນຂົງເຂດວຽກງານທີ່ຈະຕ້ອງປັບປຸງ ພາຍໃນການບໍລິການຂັ້ນແຂວງ ເພື່ອເຮັດໃຫ້ ສປປລາວ ສາມາດດັດປັບ ແລະ ການປະຕິບັດນະໂຍບາຍໃຫ້ວ່ອງໄວ ແລະ ບັນລຸຕາມເປົ້າໝາຍການພັດທະນາໃນຊຸມປີຕໍ່ໜ້າ."

ຜົນການສໍາຫຼວດຄວາມຄິດເຫັນຂອງປະຊາຊົນຕໍ່ກັບການນໍາໃຊ້ການບໍລິການຂອງລັດແມ່ນໄດ້ມີການເຜີຍແຜ່ໃຫ້ສະມາຊິກສະພາປະຊາຊົນຂັ້ນແຂວງ ເພື່ອໃຫ້ພວກເຂົາເຈົ້າສາມາດນໍາ ໃຊ້ຂໍ້ມູນນີ້ໃນການເພີ່ມປະສິດທິພາບຕໍ່ໜ້າທີ່ຂອງພວກເຂົາໃນການຕິດຕາມກວດກາການບໍລິການຂອງລັດໃນແຂວງທີ່ຕົນຮັບຜິດຊອບ. ກະຊວງພາຍໃນ ໂດຍຮ່ວມມືກັບອົງການຄູ່ຮ່ວມພັດທະນາ ຄື: ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP), ອົງການຮ່ວມມືເພື່ອການພັດທະນາຂອງປະເທດສະວິດເຊີແລນ (SDC) ແລະ ອົງການສະຫະປະຊາຊາດກອງທຶນເພື່ອການພັດທະນາ (UNCDF) ໄດ້ຊຸກຍູ້ສົ່ງເສີມການປະຕິບັດ ການສໍາຫຼວດ ແລະ ການເຜີຍແຜ່ຜົນການສໍາຫຼວດຢ່າງຕໍ່ເນື່ອງ ເພື່ອໃຫ້ບັນດາອົງການຈັດຕັ້ງລັດໂດຍສະເພາະຂະແໜງການທີ່ໃຫ້ການບໍລິການໄດ້ນໍາໃຊ້ຜົນການສໍາຫຼວດ ເຂົ້າໃນການວາງແຜນ ແລະ ສະໜອງການບໍລິການຂອງລັດຢູ່ຂັ້ນທ້ອງຖິ່ນຢ່າງມີປະສິດທິພາບ ສອດຄ່ອງກັບຄວາມຈໍາເປັນຂອງທ້ອງຖິ່ນ. ນອກຈາກນີ້, ຍັງເປັນສ້າງກົນໄກຄວາມຮັບຜິດຊອບ ແລະ ອໍານວຍຄວາມສະດວກໃຫ້ແກ່ວຽກງານການຕິດຕາມກວດກາຂອງ ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ອົງການຈັດຕັ້ງລັດຂັ້ນທ້ອງຖິ່ນ ໄດ້ນໍາສະເໜີເຂົ້າໃນການສ້າງແຜນພັດທະນາແຫ່ງຊາດ ໃນນັ້ນລວມທັງແຜນພັດທະນາເສດຖະກິດ-ສັງຄົມ ແລະ ເປົ້າໝາຍການພັດທະນາແບບຍືນຍົງ.